# ບົດຮຽນທີ່ຖອດຖອນໄດ້ ຈາກການສ້າງເຄືອຂ່າຍອາສາສະໝັກກຸ່ມບ້ານ

# ໂຄງການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ

# ແຂວງຜົ້ງສາລີ




ຂຽນໂດຍ: ເກມນະຄອນ ໄຊຍະບົວພາ

ບົດຮຽນຈາກໂຄງການ: ຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ແຂວງຜົ້ງສາລີ

25 ເມສາ 2012

ໂຄງການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການແຂວງຜົ້ງສາລີ ເປັນໂຄງການໜຶ່ງ ທີ່ຈັດຕັ້ງປະຕິບັດກິດປັງປຸງຊີວິດການເປັນຢູ່ຂອງປະຊາຊົນຊົນເຜົ່າເຂດຊົນນະບົດຫ່າງໄກສອກຫຼີກ ທີ່ເມືອງຂວາ ລວມມີບ້ານເປົ້າໝາຍທັງໝົດ 23 ບ້ານ, ນອນໃນ 3 ກຸ່ມບ້ານ, ກຸ່ມເປົ້າໝາຍທັງໝົດມີ 857 ຫຼັງຄາເຮືອນ, 983 ຄອບຄົວ, ຈຳນວນພົນລະເມືອງ 4.759 ຄົນ, ຄອບຄົງທຸກຍາກມີ 287 ຄອບຄົວ, ຊົນເຜົ່າຂະມຸກວມເອົາ 97%, ບາງບັນຫາທີ່ພົບໃນເວລາປະຕິບັດວຽກກໍ່ຄື ວິຊາການບໍ່ມີຄວາມຮູ້ພື້ນຖານໃນພາສາຂະມຸຈຶ່ງເປັນບັນຫາໃນການສື່ສານລະຫວ່າງວິຊາການ ແລະ ກຸ່ມເປົ້າໝາຍ, ໂດຍສະເພາະແມ່ນ ກຸ່ມເປົ້າໝາຍທີ່ເປັນຜູ້ຍິງຊົນເຜົ່າ,

ໃນນີ້ການສ້າງຄວາມເຂັ້ມແຂງໃຫ້ກັບຊຸມຊົນກໍ່ແມ່ນເປົ້າໝາຍໜຶ່ງຂອງໂຄງການ, ການສ້າງອາສາສະໝັກກຸ່ມບ້ານເປັນກິດຈະກຳໜຶ່ງທີ່ສ້າງຄວາມເຂັ້ມແຂງໃຫ້ກັບຊາວບ້ານໃນບ້ານເປົ້າໝາຍເພື່ອຮຽນຮູ້ວິທີການຈັດຕັ້ງປະຕິບັດກິດຈະກຳ, ເຕັກນິກຫຼັກວິຊາການ, ການຕິດຕາມກິດຈະກຳພາກສະໜາມ, ຊ່ວຍອຳນວຍຄວາມສະດວກ ແລະ ຊ່ວຍແປພາສາຊົນເຜົ່າ, ໂດຍຄັດເລືອກເອົາຕົວແທນຊາວບ້ານໃນແຕ່ລະກຸ່ມບ້ານຜູ້ທີ່ມີຄວາມຫ້າວຫັນກຸ່ມບ້ານລະສອງຄົນ, ຍິງໜຶ່ງຄົນເພື່ອເປັນຕົວແທນເຮັດວຽກຮ່ວມກັບໂຄງການ.

1. **ຄວາມໝາຍ ແລະ ແນວຄວາມຄິດໃນການສ້າງອາສາສະໝັກກຸ່ມບ້ານ**

   ອາສາສະໝັກກຸ່ມບ້ານແມ່ນຜູ້ຊ່ວຍຕິດຕາມໜ້າວຽກທີ່ໂຄງການໄດ້ຈັດຕັ້ງປະຕິບັດໃນບ້ານເປົ້າໝາຍ, ໂດຍຖືກຄັດເລືອກຈາກຊາວບ້ານໃນໃນບ້ານເປົ້າໝາຍຂອງໂຄງການ, ໂດຍແມ່ນຄົນຊົນເຜົ່າທີ່ໂຄງການດຳເນີດກິດຈະກຳຢູ່ ເພື່ອມາຮ່ວມງານນຳໂຄງການ, ນອກຈາກຕິດຕາມການຈັດຕັ້ງປະຕິບັດໜ້າວຽກຕ່າງໆແລ້ວຍັງເປັນຜູ້ລາຍງານບັນຫາ ແລະ ສະພາບການຕ່າງໆທີ່ເກີດຂຶ້ນໃນກຸ່ມບ້ານຕົນເອງຮັບຜິດຊອບໃຫ້ກັບໂຄງການ ແລະ ຫ້ອງການອື່ນໆຂອງເມືອງທີ່ກ່ຽວຂ້ອງຮັບຊາບ ແລະ ທັນສະພາບການ, ອາສາສະໝັກກຸ່ມບ້ານຍັງເປັນຜູ້ຊ່ວຍແປພາສາຊົນເຜົ່າ ແລະ ອຳນວຍຄວາມສະດວກໃຫ້ທີມງານໂຄງການໃນເວລາປະຕິບັດວຽກພາກສະໜາມ.

2. **ຈຸດປະສົງ ແລະ ເປົ້າໝາຍຂອງການສ້າງອາສາສະໝັກກຸ່ມບ້ານ**

   1. ເພື່ອຊ່ວຍແປພາສາຊົນເຜົ່າ ແລະ ອຳນວນຄວາມສະດວກໃຫ້ທີມງານໃນການຈັດຕັ້ງກິດຈະກຳພາກສະໜາມ
   2. ເປັນຕົວແທນທີມງານໂຄງການໃນການປະສານງານກັບອົງການຈັດຕັ້ງຂັ້ນບ້ານ ແລະ ກຸ່ມເປົ້າໝາຍທີ່ທຸກຍາກ.

3. ເພື່ອສ້າງຄວາມເຂັ້ມແຂງໃຫ້ແມ່ຍິງໃນບ້ານເປົ້າໝາຍໃດ້ມີສ່ວນຮ່ວມໃນການຮ່ວມວຽກພັດທະນານຳໂຄງການ ແລະ ເມືອງ.

- ເປົ້າໝາຍຂອງການສ້າງອາສາສະໝັກກຸ່ມບ້ານ
  -ສ້າງອາສາສະໝັກກຸ່ມບ້ານ ໂດຍການສ້າງຊາວບ້ານຜູ້ທີ່ມີຄວາມຮູ້ຄວາມສາມາດໃນບ້ານຕ່າງໆທີ່ນອນຢູ່ໃນບ້ານເປົ້າໝາຍທັງຍິງ ແລະ ຊາຍ ໃຫ້ມີສ່ວນຮ່ວມວຽກພັດທະນາຊຸມຊົນເຂົາເຈົ້າເອງ.
  -ສ້າງຄວາມອາດສາມາດໃຫ້ກັບອາສາສະໝັກກຸ່ມບ້ານໃຫ້ຮູ້ກ່ຽວກັບລະບົບການຕິດຕາມ, ການປະເມີນຜົນກິດຈະກຳໃນຊູມຊົນ, ການລາຍງານ ແລະ ການໃຫ້ຄຳປຶກສາກັບກຸ່ມປົ້າໝາຍ.
  -ພາຍຫຼັງສິ້ນສຸດອາສາສະໝັກບ້ານທັງຍິງ ແລະ ຊາຍສາມາດນຳໃຊ້ປະສົບການ ແລະ ບົດຮຽນຕ່າງໆເຂົ້າໃນການພັດທະນາໝູ່ບ້ານ, ຄອບຄົວຕົນເອງ ແລະ ສາມາດນຳໃຊ້ບົດຮຽນດັ່ງກ່າວຮ່ວມກັບອົງການຈັດຕັ້ງອື່ນໄດ້.

## 3. ຂັ້ນຕອນການຈັດຕັ້ງອາສາສະໝັກກຸ່ມບ້ານ

### 3.1 ຄັດເລື່ອກອາສາສະໝັກ

ໃນການຄັດເລືອກອາສາສະມັກກຸ່ມບ້ານ, ທີມງານໄດ້ລົມກັບກັບອຳນາດການປົກຄອງແຕ່ລະບ້ານໃຫ້ເປັນຜູ້ປະກາດຫາຜູ້ທີ່ມີຄວາມສົນໃຈໃນບ້ານເພື່ອຍື່ນຄຳຮ້ອງຂໍສະໝັກ, ໝາຍວ່າຊາວບ້ານໃນບ້ານເປົ້າໝາຍໝົດທຸກຄົນມີສິດໃນການຍື້ນຄຳຮ້ອງສະໝັກຕຳແໜ່ງດັ່ງກ່າວ, ໂດຍອີງໃສ່ບາງມາດຖານ ແລະ ເງື່ອນໄຂດັ່ງນີ້:

-ເປັນຄົນພື້ນຖານໃນບ້ານເປົ້າໝາຍໂຄງການຢ່າງແທ້ຈິງ.
-ຄອບຄົວບໍ່ມີແຜນທີ່ຈະຍົກຍ້າຍບ້ານໄປເມືອງອື່ນ ຫຼື ແຂວງອື່ນ.
-ຜ່ານມາບໍ່ເຄີຍມີສ່ວນກ່ຽວຂ້ອງ ຫຼື ພົວພັນກັບຢາເສບຕິດ ແລະ ການພະນັນມາກ່ອນ.
-ອ່ານ ແລະ ຂຽນພາສາລາວອອກເປັນຢ່າງດີ.
-ສາມາດເວົ້າ, ເຂົ້າໃຈ ແລະ ສາມາດແປພາສາຂະມຸເປັນພາສາລາວໄດ້ເປັນຢ່າງດີ.
-ກ້າສະແດງອອກ, ກ້າອອກຄຳຄິດຄຳເຫັນ ແລະ ມີຄວາມຫ້າວຫັນຕໍ່ໜ້າທີ່ການງານ.
-ເປັນທີ່ຍອມຮັບຈາກອົງການຈັດຕັ້ງບ້ານ.
-ມີອາຍຸແຕ່ 25 ປີຂຶ້ນໄປ.

ຄຳຮ້ອງທີ່ຜູ້ສະໝັກຍື່ນຕ້ອງໄດ້ຮັບການຢັ້ງຢືນຈາກນາຍບ້ານ ຫຼື ອຳນາດການປົກຄອງໃນບ້ານນັ້ນ ພາຍຫຼັງໄດ້ຮັບຄຳຮ້ອງແລ້ວອຳນາດການປົກຄອງບ້ານຈະເປັນຜູ້ຄັດເລືອກຄຳຮ້ອງທີ່ມີຖືກຕາມມາດຖານໄດ້ລະບຸໄວ້ຂ້າງເທິງ ບ້ານ 4 ຄົນ, ຫຼັງຈາກນັ້ນທີມງານໂຄງການເປັນຜູ້ສຳພາດເພື່ອຫາຜູ້ທີ່ມີຄວາມເໝາະສົມ,ໂດຍກຳນົດເອົາກຸ່ມບ້ານລະ 2 ຄົນ ຍິງ 1 ຄົນ.

4. **ການກຳນົດໜ້າທີ່ ແລະ ຄວາມຮັບຜິດຊອບຂອງອາສາສະໝັກບ້ານ**

ອາສາສະໝັກກຸ່ມບ້ານໃນແຕ່ລະກຸ່ມບ້ານມີໜ້າທີ່ຫຼັກໆໃນການຊ່ວຍແຕ່ລະທີມ ງານຕິດຕາມກິດ ແລະ ຊີ້ນຳ ປະຕິບັດຈະກຳຕ່າງໆໃນບ້ານທີ່ຕົນເອງຮັບຜິດຊອບເຊັ່ນ:
ຊ່ວຍທີມງານເກັບກຳຂໍ້ມູນຕ່າງໆ, ຊ່ວຍນຳພາ ດ້ານເຕັດນິກໃຫ້ກັບຊາວບ້ານ, ລາຍງານ
ສະພາບການຕ່າງທີ່ເກີດຂື້ນຢ່າງກະທັນ ຫັນໃນພາກສະໜາມ ແລະ ມີການພົວພັນກັບພາກສ່ວນອື່ນໆ ເພື່ອອຳນວຍຄວາມສະດວກໃຫ້ກັບທີມງານເວລາລົງປະຕິບັດກິດຈະກຳ ພາກສະໜາມ ແລະ ມີໜ້າທີ່ປະສານງານກັບອຳນາດການປົກຄອງບ້ານ,ໂຄງການ ແລະ ໜ່ວຍງານທີ່ກ່ຽວ
ຂ້ອງອື່ນໆເພື່ອຕິດຕາມ, ຊຸກຍູ້ບັນ
ດາກິດຈະກາຳຕ່າງໆໃນແຕ່ລະຂົງເຂດທີ່ຕົນເອງຮັບຜິດຊອບຫຼືເຂດອື່ນທີ່
ແມ່ນບ້ານເປົ້າໝາຍຂອງໂຄງ ການ.
ສົ່ງບົດລາຍງານປະຈຳເດືອນຜົນຂອງການຈັດຕັ້ງປະຕິບັດກິດຈະກາຳ
ໃຫ້ພາກສ່ວນທີ່ກ່ຽວຂ້ອງຢ່າງເປັນທາງ ການແລະບໍ່ເປັນທາງການ,
ເຂົ້າຮ່ວມປະຊຸມປະຈຳເດືອນນຳແຕ່ລະ ທີມງານ ແລະ ກອງປະຊຸມຂັ້ນເຂດ
ເພື່ອວາງແຜນຮ່ວມກັນ, ອຳນວຍຄວາມສະດວກ ແລະ ແປພາສາຂະມຸ ໃນເວລາມີກອງປະຊຸມບ້ານ ແລະ ມີການຝຶກອົບຮົມຕ່າງໆ ການເຮັດວຽກຮ່ວມກັບໂຄງການສະເລ່ຍແມ່ນ 15 ມື້ຂື້ນໄປຕໍ່ເດືອນ

**ຂໍ້ກຳນົດ**:

1. ອາສາສະໝັກຂັ້ນເຂດແຕ່ລະທ່ານ ຕ້ອງປະຕິບັດຕາມແຜນທີ່ວາງໄວ້ນຳແຕ່ລະທີມງານຖ້າບໍ່ປະຕິບັດຕາມແຜນທີ່ວາງໄວ້ເກີນ 2 ຄັ້ງໂດຍບໍ່ມີເຫດຜົນ ຈະຖືກຕັດອອກຈາກການເປັນອາສາສະໝັກຂັ້ນເຂດຂອງໂຄງການ ແລະ ບໍ່ມີສິດໄດ້ຮັບຄ່າຕອບແທນອື່ນໆທີ່ໄດ້ລະບຸໄວ້ຂ້າງລຸ່ມ.

2.

ອາສາສະມັກຂັ້ນເຂດຕ້ອງໄດ້ຮັບຜິດຊອບເອງກ່ຽວກັບຄວາມປອດໄພໃນການເດີນທາງລະຫວ່າງບ້ານຕໍ່

ບ້ານ, ໃນກໍລະນີເກີດອຸບັດຕິເຫດ ແລະ
ເຈັບເປັນອື່ນໆທາງໂຄງການຈະບໍ່ຮັບຜິດຊອບຄ່າໃຊ້ຈ່າຍໃນການປິ່ນປົວຕ່າງໆ.

3. ອາສາສະມັກຂັ້ນເຂດຂ້າງເທິງນັ້ນຈະເຮັດວຽກນຳໂຄງການນັບແຕ່ວັນທີ່, ເດືອນ, ປີ
ທີ່ໄດ້ເຊັນສັນຍາກັນ

**ຄວາມຮັບຜິດຊອບຂອງໂຄງການຕໍ່ກັບການປະຕິບັດວຽກຂອງອາສາສະໝັກກຸ່ມບ້ານ**:

ແຕ່ລະເດືອນໂຄງການຈະຈ່າຍເງິນອັດຕາກິນ ແລະ ຄ່າເດີນທາງ
ລະຫວ່າງບ້ານຕໍ່ບ້ານໃຫ້ອາສາສະມັກຂັ້ນເຂດ ເພື່ອຕິດຕາມກິດຈະກຳ ແລະ
ຮ່ວມເຮັດວຽກນຳແຕ່ລະທີມງານຈຳນວນຕາມລະບຽບຂອງໂຄງການທີ່ໄດ້ວາງ ອອກ,
ຖ້າເດີນທາງມາປະຊຸມຢູ່ໃນເມືອງໂຄງການຈະເປັນຜູ້ຮັບຜິດຊອບຄ່າເດີນທາງໃຫ້,
ສຳລັບອັດຕາກິນເວລາ ມາປະຊຸມຢູ່ເມືອງແມ່ນ 2 ມື້ຂື້ນໄປຈື່ງໄດ້ຮັບອັດຕາກິນ (ຖ້າ 1
ມື້ແມ່ນບໍ່ໄດ້ຮັບອັດຕາກິນ), ໃນການຕິດຕາມ ແລະ
ປະຕິບັດວຽກພາກສະໜາມທີມງານໂຄງການຈະສະໜັບສະໜູນແບບຟອມຕິດຕາມກິດຈະກຳ,ຟອມກາ
ນ ຊຽນບົດລາຍງານ ແລະ ແຜນປະຈຳເດືອນ.

5. **ການເສີມສ້າງຄວາມສາມາດໃຫ້ກັບອາສາສະໝັກກຸ່ມບ້ານ.**

ກ່ອນການປະຕິບັດວຽກພາກສະໜາມທີມງານໂຄງການໄດ້ຝຶກອົບຮົມເຕັກນິກດ້ານຕ່າງໆໃຫ້ກັບອາສາສະໝັກເພື່ອເປັນການເສີມສ້າງຄວາມເຂັ້ມແຂງກ່ອນການລົງນຳພາຊາວບ້ານເຮັດຕົວຈິງເຊັ່ນ: ວິທີການເຮັດວຽກຮ່ວມຊຸມຊົນຊົນເຜົ່າທີ່ທຸກຍາກ ແລະ ການປະພຶດຕົວໃນຊຸມຊົນ, ການສ້າງແຜນການຕິດຕາມ ແລະ ການລາຍງານປະຈຳເດືອນ, ລະບົບການຕິດຕາມ ແລະ ປະເມີນຜົນກິດຈະກຳພາກສະໜາມ, ຄວາມຮູ້ທົ່ວໄປກ່ຽວກັບເຕັກນິກການປູກຝັງ ແລະ ລ້ຽງສັດ, ຄວາມຮູ້ທົ່ວໄປກ່ຽວກັບໂພຊະນາການ ແລະ ເຂົ້າຮ່ວມທັດສະນະສຶກສາແລກປ່ຽນບົດຮຽນກັບໂຄງການອື່ນໆ. ການເສີມສ້າງຄວາມສາມາດແມ່ນສິ່ງສຳຄັນທີ່ສຸດຕໍ່ອາສາສະໝັກບ້ານໃນການລົງໃຫ້ຄຳແນະນຳແກ່ຊາວບ້ານເພື່ອເຮັດຕົວຈິງຜ່ານມາພວກເຮົາໄດ້ຈັດກອງປະຊຸມປະຈຳເດືອນຮ່ວມກັບອາສາສະມັກກຸ່ມບ້ານເພື່ອໃຫ້ເຂົາເຈົ້າໄດ້ລາຍງານຜົນການປະຕິບັດກິດຈະກຳໃນຜ່ານມາລວມທັງບັນຫາທີ່ເກີດ ແລະ ຜົນກະທົບຕ່າງ ເພື່ອເປັນບົດຮຽນໃນການແກ້ໄຂໃນຕໍ່ໜ້າ, ໃນກອງປະຊຸມນີ້ຍັງໄດ້ສ້າງແຜນກິດຈະກຳປະຈຳເດືອນຮ່ວມກັນ, ໂດຍມີການແບ່ງວຽກ ແລະ ທຳຄວາມເຂົ້າໃຈດ້ານເຕັກນິກກ່ອນການລົງປະຕິບັດຕົວຈິງ.

**6. ການປະຕິບັດວຽກພາກສະໜາມ**

ການພົວພັນຂອງອາສາສະໝັກກຸ່ມບ້ານ

ພວກເຮົາໄດ້ຈັດຕັ້ງອາສາສະໝັກຢູ່ 3 ກຸ່ມບ້ານ, ອາສາສະໝັກໃນ 3 ກຸ່ມບ້ານແມ່ນໄດ້ສ້າງເຄືອຂ່າຍແລກປ່ຽນຂໍ້ມູນຂ່າວສານຊຶ່ງກັນ ແລະ ກັນ ໂດຍສະເພາະແມ່ນ: ຂໍ້ມູນກ່ຽວກັບການລະບາດຂອງພະຍາດສັດ, ຂໍ້ມູນຂ່າວສານດ້ານການຂຶ້ນລົງຂອງລາຄາສິນຄ້າ ແລະ ເຄື່ອງປ່າຂອງດົງໃນແຕ່ລະຊ່ວງ, ຕະຫຼອດຮອດວິທີການຈັດຕັ້ງກິດຈະກໍາກໍ່ໄດ້ຮັບການແລກປ່ຽນກັນເປັນໄລຍະໆ, ນອກນີ້ອາສາ ສະໝັກຍັງຊ່ວຍກັນປະຕິບັດວຽກໂດຍບໍ່ຈໍາແນກເຂດໃດເຂດໜຶ່ງ.

**ຄວາມຍືນຍົງໃນການຈັດຕັ້ງປະຕິບັດກິດຈະກໍາ**

ການສ້າງອາສາສະໝັກກຸ່ມບ້ານໂດຍຄົນຊົນເຜົ່າ ແລະ ເປັນຄົນພື້ນທີ່ບ້ານເປົ້າໝາຍນັ້ນເອງ, ເຫັນວ່າປະສິດທິພາບຂອງກິດຈະກໍາດີຂຶ້ນ, ການເກັບຮັກສາຂໍ້ມູນຂ່າວສານ, ເອກະສານ ແລະ ສະຖິຕິຕ່າງໆໄດ້ຮັບການປັບປຸງ ແລະ ຖືກເກັບຮັກສາໄວ້ເປັນຢ່າງດີ, ລະບົບການລາຍງາຍກໍ່ໄດ້ຮັບການປັບປຸງ, ຊຶ່ງມັນສະແດງອອກເວລາມີບັນຫາເກີດຂຶ້ນໃນບ້ານໃດນຶ່ງ ບັນຫາດັ່ງກ່າວກໍ່ໄດ້ຮັບການລາຍງານຮອດພາກສ່ວນທີ່ກ່ຽວຂ້ອງຂອງເມືອງຢ່າງທັນການເຊັ່ນ: ການລະບາດຂອງພະຍາດສັດໃນບ້ານໃດໜຶ່ງຂໍ້ມູນດັ່ງກ່າວໄດ້ການລາຍງານຮອດຫ້ອງການກະສິກໍາຫຼືໂຄງການໄດ້ທັນເວລາ ແລະ ໄດ້ຮັບຜົນເສຍໜ້ອຍທີ່ສຸດ.

**7. ບົດຮຽນທີ່ຖອດຖອນໄດ້**

-ການສ້າງອາສາສະໝັກກຸ່ມບ້ານໂດຍການຄັດເລືອກຕົວແທນຈາກບ້ານເປົ້າໝາຍໄດ້ເຮັດໃຫ້ຊາວບ້ານໃນບ້ານເປົ້າໝາຍມີຄວາມໝັ້ນໃຈຕໍ່ກັບການປະຕິບັດກິດຈະກໍາຫຼາຍຂຶ້ນ, ການສື່ສານພາສາຊົນເຜົ່າທີ່ເຫັນວ່າເປັນບັນຫາຕໍ່ການປະຕິບັດວຽກ ໄດ້ຮັບການແກ້ໄຂໂດຍການແປ ໃຫ້ມີຄວາມກະຈ່າງແຈ້ງຂຶ້ນ, ໂດຍສະເພາະແມ່ນການເຮັດວຽກຮ່ວມກັບກຸ່ມແມ່ຍິງຊົນເຜົ່າທີ່ບໍ່ຮູ້ໜັງສືກໍ່ໄດ້ຮັບການແກ້ໄຂ ແລະ ເຮັດໃຫ້ແມ່ຍິງເຂົ້າຮ່ວມ ແລະ  ມີສ່ວນຮ່ວມໃນກິດຈະກໍາຫຼາຍຂຶ້ນ, ນອກນີ້ອາສາສະໝັກບ້ານຍັງໄດ້ເປັນຕົວແທນຂອງຊາວບ້ານໃນການປະຕິບັດວຽກບົດບາດຍິງຊາຍໃນລະດັບຄົວເຮືອນ ແລະ ໃນບ້ານ.

-ເປີດໂອກາດໃຫ້ອາສາສະມັກບ້ານໄດ້ຮຽນຮູ້, ເສີມສ້າງຄວາມສາມາດ ແລະ ທັກສະຂອງເຂົາເຈົ້າ,

-ການປະສານງານ ແລະ ການພົວພັນວຽກກັບອົງການປົກຄອງຊຸມຊົນ ໄດ້ຮັບການປະສານງານທັນເວລາ ແລະ ກະຈ່າງແຈ້ງ.

-ລະບົບການຕິດຕາມວຽກໃນລະດັບບ້ານມີຄວາມເຂັ້ມແຂງ ແລະ ບັນຫາໄດ້ຮັບການແກ້ໄຂທັນເວລາ (ຜ່ານມາເຫັນວ່າເວລາເກີດບັນຫາໃນບ້ານຫຼືກຸ່ມບ້ານດັ່ງກ່າວ ບັນຫາບໍ່ໄດ້ລາຍງານໃຫ້ພາກສ່ວນກ່ຽວຂ້ອງຂອງເມືອງ ທັນກັບເວລາ ແລະ ມີຄວາມຫຼ້າຊ້າຫຼາຍ ເຮັດໃຫ້ເກີດຜົນເສຍຫາຍຫຼາຍ, ໂດຍສະເພາະແມ່ນການລະບາດຂອງພະຍາດສັດ)

-ຊຸມຊົນມີຄວາມໝັ້ນໃຈໃນການປະຕິບັດກິດຈະກຳຮ່ວມໂຄງການຫຼາຍຂຶ້ນ, ເພາະວ່າອາສາສະໝັກເປັນຄົນທ້ອງຖິ່ນ ແລະ ເປັນຄົນຊົນເຜົ່າ ຊາວບ້ານສາມາດປຶກສາຫາລື, ໂອ້ລົມສົນທະນາບັນຫາຢ່າງເປັນກັນເອງ, ທຸກຄຳສະເໜີຂອງຊາວບ້ານແມ່ນໄດ້ຮັບການລາຍງານຮອດໂຄງການ ແລະ ເມືອງ.

-ພາຍຫຼັງໂຄງການສິ້ນສຸດ ອາສາສະໝັກບາງຄົນກໍ່ຍັງເຄື່ອນໄຫວວຽກງານດັ່ງກ່າວໃນບ້ານຂອງເຂົາເຈົ້າ ແລະ ບ້ານໃກ້ຄຽງເຊັ່ນ: ການໃຫ້ຄຳປຶກສາກ່ຽວກັບການຮັກສາສຸຂະພາບແມ່ຍິງ, ຊ່ວຍແມ່ມານເວລາອອກລູກ ແລະ ຊ່ວຍຕິດຕາມກິດຈະກຳອື່ນໆໃນບ້ານ.

**8. ສິ່ງທ້າທາຍ**

-ສະພາບໝູ່ບ້ານຫ່າງໄກສອກຫຼີກໄປມາມີຄວາມລຳບາກ, ເປັນບັນຫານຶ່ງທີ່ເຮັດໃຫ້ອາສາສະໝັກພົບບັນຫາຫຍຸ້ງຍາກເວລາລົງຕິດຕາມວຽກ ໂດຍສະເພາະແມ່ນຊ່ວງລະດູຝົນ.

-ຄວາມຖີ່ຂອງການລົງຕິດຕາມວຽກຂອງອາສາສະໝັກຍັງບໍ່ປະຕິບັດຕາມລະບຽບທີ່ວາງໄວ້ (ບາງເດືອນລົງຕິດຕາມພຽງສອງຄັ້ງຕໍ່ບ້ານຕໍ່ເດືອນເທົ່ານັ້ນ)

-ລະດູການຜະລິດອາສາສະໝັກຈະໃຊ້ເວລາທຳການຜະລິດໃນຄອບຄົວ ບາງຄັ້ງເຮັດໃຫ້ການຕິດຕາມກິດຈະກຳມີຄວາມຫຼ້າຊ້າ.

-ການສ້າງແຜນຂອງແຕ່ລະທີມງານຮ່ວມກັບອາສາສະໝັກຄວນກະກຽມ, ອະທິບາຍໃຫ້ລະອຽດ ແລະ ໃຫ້ເຂົາເຈົ້າເຂົ້າໃຈຄວາມໝາຍຢ່າງກະຈ່າງແຈ້ງ, ຖ້າບໍ່ດັ່ງນັ້ນການຕິດຕາມກິດຈະກຳຈະບໍ່ໄດ້ຕາມເປົ້າໝາຍທີ່ວາງໄວ້.

-ອາສາສະໝັກບາງຄົນຂາດຄວາມເອົາໃຈໃສ່ໃນການຕິດຕາມຢ່າງໃກ້ສິດກັບກິດຈະກຳ (ການຖາມຂໍ້ມູນປາກເປົ່າຈາກຜູ້ປະຕິບັດ ແລ້ວລາຍງານໃຫ້ວິຊາການ ໂດຍບໍ່ໄດ້ລົງສັງເກດກິດຈະກຳໂດຍກົງ) ເຮັດໃຫ້ກິດຈະກຳບໍ່ມີຄຸນນະພາບ.

-ຄວາມເຂົ້າໃຈຕໍ່ກັບເຕັກນິກຫຼັກວິຊາການຍັງເປັນບັນຫາເຮັດໃຫ້ກິດຈະກຳບໍ່ໄປຕາມແຜນການທີ່ວາງໄວ້

-ພາຍຫຼັງໂຄງການສິ້ນສຸດອາສາສະໝັກຈະສືບຕໍ່ຕິດຕາມແຕ່ບ້ານຕົນເອງເທົ່ານັ້ນ ເພາະວ່າເຂົາເຈົ້າບໍ່ມີງົບປະມານພຽງພໍໃນການໃຊ້ຈ່າຍເດີນທາງ ແລະ ອັດຕາກິນ.